ແກ້ວພິລາວັນ ອາໄພລາດ ແລະ ໂທມັສ ມິດເລ

ຫ້ອງປະຊຸມຂະໜານ ທີ 9

II8 ບັນຫາການຈັດຕັ້ງ

ວັນພະຫັດ, ທີ 28 ຕຸລາ 2004

# ການສ້າງນິຕິບັນຍັດກ່ຽວກັບການສະໜອງນ້ຳ ໃຫ້ແກ່ຜູ້ທີ່ທຸກຍາກສຳລັບເຄືອຂ່າຍການຮ່ວມງານ ລັດ-ເອກະຊົນ-ຊຸມຊົນ ຢູ່ໃນ ສປປ ລາວ

ກອງປະຊຸມ ເວເດັກ ຄັ້ງທີ 30

“ວິທີການ ການເອົາຄົນມາເປັນຈຸດໃຈກາງຂອງ ນ້ຳ ແລະ ສຸຂະພິບານສິ່ງແວດລ້ອມ”

25-29 ຕຸລາ 2004, ຫໍວັດທະນະທຳແຫ່ງຊາດ, ນະຄອນຫຼວງວຽງຈັນ, ສປປ ລາວ

- ນະໂຍບາຍແລະຍຸດທະສາດແຫ່ງຊາດສຳລັບການເຕີບໂຕແລະການລຶບລ້າງຄວາມທຸກຍາກເພື່ອຫຼຸດພົ້ນອອກຈາກສະຖານະພາບຂອງຄວາມດ້ອຍພັດທະນາເມື່ອເຖິງປີ 2020

- ນະໂຍບາຍໄດ້ກຳນົດການບໍລິການສະໜອງນ້ຳທີ່ມີຄວາມຍືນຍົງໃຫ້ແກ່ຊຸມຊົນທີ່ອາໃສຢູ່ໃນຕົວເມືອງ, ຕົວເມືອງນ້ອຍ ແລະ ຊົນນະບົດໃຫ້ໄດ້ 90% ເມື່ອເຖິງປີ 2020

- ໃນປັດຈຸບັນນີ້ ມີຫຼາຍກວ່າ 80 ຕົວເມືອງນ້ອຍ ແລະ 5000 ໝູ່ບ້ານຫ່າງໄກສອກຫຼີກຍັງຂາດການບໍລິການສະໜອງນ້ຳ.

- ຕ້ອງການລະດົມກົນໄກການຄຸ້ມຄອງ ແລະ ການເງິນໃໝ່ເພື່ອໃຫ້ໄດ້ການບໍລິການ ການສະໜອງນ້ຳທີ່ມີການດຳເນີນງານ ແລະ ບົວລະບັດຮັກສາຢ່າງມີຄວາມຍືນຍົງເພື່ອໃຫ້ບັນລຸໄດ້ເປົ້າໝາຍປີ 2020ທີ່ໄດ້ສະເໜີຢູ່ໃນຍຸດທະສາດແຫ່ງການເຕີບໂຕແລະລົບລ້າງຄວາມທຸກຍາກແຫ່ງຊາດ.

- ບົດສະເໜີນີ້ໄດ້ສະແດງໃຫ້ເຫັນພາບລວມຂອງການສຶກສາທີ່ນຳພາໂດຍພາກລັດໃນເມື່ອບໍ່ດົນນານມານີ້ເພື່ອສ້າງນິຕິບັນຍັດກ່ຽວກັບການສະໜອງນ້ຳໃຫ້ແກ່ຜູ້ທຸກ.

## ຍຸດທະສາດ

- ຍຸດທະສາດຂະແໜງການຈັດຫານ້ຳສະອາດແລະອານາໄມສິ່ງແວດລ້ອມເຂດຊົນນະບົດຊຶ່ງໄດ້ອອກນຳໃຊ້ໃນປີ 1997,ແລະໄດ້ຮັບການປັບປຸງໃນເດືອນມິຖຸນາ 2004.
- ປັດຈຸບັນນີ້ ຍັງບໍ່ທັນມີນະໂຍບາຍລະອຽດສຳລັບຂະແໜງນ້ຳປະປາ

## ນະໂຍບາຍ

- ທັງນ້ຳປະປາ ແລະ ນ້ຳສະອາດແມ່ນຢູ່ພາຍໃຕ້ນະໂຍບາຍອັນດຽວກັນຊຶ່ງໄດ້ລະບຸຢູ່ໃນຂໍ້ຕົກລົງຂອງນາຍົກລັດຖະມົນຕີສະບັບເລກທີ 37/ນຍ ວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາຂະແໜງນ້ຳປະປາ.

- ລາຄານ້ຳທີ່ຜູ້ດຳເນີນທຸລະກິດເອກະລາດຂະໜາດນ້ອຍຂາຍຢູ່ໃນຕົວເມືອງນ້ອຍທີ່ທຸກຍາກແລະເປັນການບໍລິການສະໜອງນ້ຳທີ່ບໍ່ທັນແມ່ນທາງການແມ່ນແພງຫຼາຍແຕ່10,000-15,000ກີບ/ມ$^3$ (ທຽບເທົ່າກັບ US$1.00 - 1.50-ມ$^3$)
- ເພື່ອເປັນການສົມທຽບ, ລາຄານ້ຳປະປາມີແຕ່ພຽງ 1,700 ກີບ/ມ$^3$ (ທຽບເທົ່າUS$0.16/ມ$^3$) ຢູ່ໃນຕົວເມືອງໃຫຍ່ ແລະ ມີຄວາມມັ່ງຄັ່ງ.

*ການສ້າງນິຕິບັດຍັດ ກ່ຽວກັບ ການສະໜອງນ້ຳໃຫ້ແກ່ຜູ້ທຸກ*

*ສຳລັບເຄືອຂ່າຍການຮ່ວມງານ ລັດ-ເອກະຊົນ–ຊຸມຊົນ ຢູ່ໃນ ສປປ ລາວ*

| ຊຸມຊົນ ຢູ່ຊົນນະບົດ | ນ້ຳປະປາ ລັດວິສາຫະກິດ | ເອກະຊົນ ຂະໜາດນ້ອຍ ຢູ່ຕົວເມືອງນ້ອຍ | ນ້ຳດື່ມບໍລິສຸດ ໂຮງງານເອກະຊົນ | |
|---|---|---|---|---|
















| | | | | |
|---|---|---|---|---|
| ກີບ US$0 | 1,700 ກີບ US$0.16 | 10,000 ກີບ US$0.94 | 250,000 ກີບ US$23.58 | 2,666,000 ກີບ US$251.51 |

## ລາຄານ້ຳ 1ມ$^3$ ຈາກຜູ້ສະໜອງທີ່ແຕກຕ່າງກັນ ຢູ່ໃນ ສປປ ລາວ.

ແຫຼ່ງຂໍ້ມູນ: ທະນາຄານໂລກ

- ການລົງທຶນຂອງເອກະຊົນເຂົ້າໃສ່ການສະໜອງນ້ຳແມ່ນມີຈຳນວນໜ້ອຍຫຼາຍຢູ່ ໃນ ສປປ ລາວ
- ມີແນວໂນ້ມຂອງສັນຍາປະເພດກໍ່ສ້າງ - ເປັນເຈົ້າຂອງ - ດຳເນີນງານ (BOO)
- ສັນຍາປະເພດນີ້ແມ່ນແບບງ່າຍດາຍໂດຍອີງໃສ່ການລົງທຶນຮ່ວມກັນລະຫວ່າງເອກະຊົນ ແລະ ຊຸມຊົນ ແລະ ມີຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນລະຫວ່າງຜູ້ຮ່ວມງານໃນລະດັບສູງ
- ຕົວແບບນີ້ບໍ່ໄດ້ແຜ່ຂະຫຍາຍ, ທັງນີ້ສ່ວນໜຶ່ງແມ່ນເນື່ອງມາຈາກຊັບພະຍາກອນທາງດ້ານການເງິນມີຂີດຈຳກັດ ແລະ ໜີ້ສິນທາງດ້ານການຄ້າກໍມີຄ່າໃຊ້ຈ່າຍສູງ.

- ລັດຖະບານລາວໄດ້ອະນຸມັດນຳໃຊ້ດຳລັດໃໝ່ກ່ຽວກັບການສົ່ງເສີມ ແລະ ການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ (ດຳລັດສະລັບເລກທີ 42/ນຍ, 20 ເມສາ 2004)
- ທະນາຄານໃໝ່ສຳລັບຜູ້ປະກອບການ (ອີງໃສ່ມາດຕາ 8 ຂອງດຳລັດສະບັບນີ້) ຈະໄດ້ຮັບການສ້າງຕັ້ງຂຶ້ນເພື່ອຊຸກຍູ້ສົ່ງເສີມການພັດທະນາທຸລະກິດທ້ອງຖິ່ນ ແລະ ຫຼຸດຜ່ອນເວລາທີ່ໃຊ້ໃນການເລີ້ມຕົ້ນທຸລະກິດໃໝ່




## ຈໍານວນວັນ ແລະ ຂັ້ນຕອນຕ່າງໆເພື່ອເລີ້ມຕົ້ນທຸລະກິດ.

ແຫຼ່ງຂໍ້ມູນ: ທະນາຄານໂລກ 2004

# ການສ້າງກົດໝາຍວ່າດ້ວຍການສະໜອງນ້ຳ

ປັດຈຸບັນນີ້, ຜູ້ທີ່ມີສ່ວນກ່ຽວຂ້ອງຢູ່ໃນຂະແໜງການກຳລັງຄົ້ນຄວ້າເບິ່ງວ່າຈະສ້າງກົດໝາຍວ່າດ້ວຍການສະໜອງນ້ຳແນວໃດໃຫ້ສ່ອງແສງເຖິງການພັດທະນາທີ່ກຳລັງດຳເນີນຢູ່ໃນປັດຈຸບັນທັງຢູ່ໃນຕົວເມືອງ ແລະ ຊົນນະບົດ.

## ທຸລະກິດທີ່ໄດ້ລົງທະບຽນທັງໝົດທົ່ວປະເທດ(ພາກສ່ວນທຸລະກິດບໍ່ເປັນທາງການແມ່ນບໍ່ໄດ້ມີການບັນທຶກ)

| | |
|---|---|
| ນ້ຳດື່ມບໍລິສຸດ | 188 |
| ໂຮງງານທີ່ນຳໃຊ້ນ້ຳ | |
| ໂຮງນ້ຳກ້ອນ | 362 |
| ບໍລິສັດກໍ່ສ້າງ | 427 |
| ຮ້ານຄ້າ | 283 |
| **ທັງໝົດ** | 1,267 |

## ປັດຈຸບັນນີ້ຍັງບໍ່ທັນມີຄວາມສົນໃຈໃນການສະໜອງນ້ຳເນື່ອງຈາກວ່າ

- ບໍ່ທັນມີການຄ້ຳປະກັນ
- ມີຄວາມຫຍຸ້ງຍາກໃນການເຂົ້າຫາສິນເຊື່ອ, ແລະ
- ຂັ້ນຕອນວຽກງານບໍລິການແມ່ນຍາວ ແລະ ສັບສົນ.

## ບັນດານິຕິບັນຍັດທີ່ພົວພັນກັບການສະໜອງນ້ຳຊຶ່ງມີຢູ່ໃນປັດຈຸບັນ

ມີເອກະສານສິດທິທາງດ້ານນິຕິກຳຫຼາຍກວ່າ100ສະບັບຊຶ່ງພົວພັນເຖິງການສະໜອງນ້ຳຊຶ່ງຕ້ອງການໃຫ້ມີການວິເຄາະເພື່ອຊ່ວຍປັບປຸງສິ່ງແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການບໍລິການສະໜອງນ້ຳຢູ່ໃນ ສປປ ລາວ.

| ປະເພດ | ຈຳນວນ |
|---|---|
| 1. ກົດໝາຍ | 29 |
| 2. ດຳລັດ | 35 |
| 3. ຄຳສັ່ງ | 1 |
| 4. ຂໍ້ຕົກລົງ | 7 |
| 5. ຂໍ້ຕົກລົງຂອງລັດຖະມົນຕີ | 3 |
| 6. ຂໍ້ກຳນົດ | 10 |
| 7. ລະບຽບການ | 4 |
| 8. ຍຸດທະສາດ | 4 |
| 9. ແຈ້ງການ ແລະ ອື່ນໆ | 8 |
| 10. ນິຕິບັນຍັດທີ່ຍັງບໍ່ທັນພິມ | 14 |
| **ລວມທັງໝົດ** | **101** |